**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ**

ກົມມາດຕະຖານ ແລະ ວັດແທກ

ເລກທີ 2800 /ກອຕ.ກມວ

ນະຄອນຫຼວງວຽງຈັນ, ວັນທີ 25 NOV 2020

**ເຖິງ:** ທ່ານ ຫົວໜ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ ແລະ ນະຄອນຫຼວງ ທີ່ນັບຖື.

**ເລື່ອງ:** ການຢັ້ງຢືນຄຸນນະພາບຜະລິດຕະພັນສິນຄ້າ ທີ່ນຳເຂົ້າ-ສົ່ງອອກ ຢູ່ ສປປ ລາວ.

- ອີງຕາມ ກົດໝາຍ ມາດຕະຖານ ສະບັບເລກທີ49/ສພຊ, ລົງວັນທີ: 18 ກໍລະກົດ 2014.
- ອີງຕາມ ກົດໝາຍ ວັດແທກ ສະບັບເລກທີ36/ສພຊ, ລົງວັນທີ: 13 ທັນວາ 2013.
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 309/ນຍ, ລົງວັນທີ 28 ກັນຍາ 2011.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງກົມມາດຕະຖານ ແລະ ວັດແທກ , ສະບັບເລກທີ 2642/ກອຕ, ລົງວັນທີ 22 ພະຈິກ 2019.

ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຫົວໜ້າພະແນກ ຊາບວ່າ: ເພື່ອຈັດຕັ້ງປະຕິບັດໃນການອຳນວຍຄວາມສະດວກທາງດ້ານການຄ້າກ່ຽວຂ້ອງ ທີ່ຕິດພັນວຽກງານມາດຕະຖານ ແລະ ວັດແທກກໍ່ຄືການອອກໃບອະນຸຍາດ ແລະ ໃບຢັ້ງຢືນຄຸນນະພາບຜະລິດຕະພັນຂອງການນຳເຂົ້າ-ສົ່ງອອກ ເພື່ອປະຕິບັດຕາມພັນທະຂອງອົງການການຄ້າໂລກ (WTO), ປະຊາຄົມເສດຖະກິດອາຊຽນ (AEC). ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອເປັນເອກະພາບກັນໃນການອະນຸຍາດອອກໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນສິນຄ້າແມ່ນອີງຕາມຂໍ້ຮຽກຮ້ອງຂອງແຕ່ລະປະເທດໃນການນຳເຂົ້າ-ສົ່ງອອກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຮ່ວມມືໃນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ
ມາດຕະຖານ ແລະ ວັດແທກ

ວຽງທອງ ວົງທະສີໄລ

ໝາຍເຫດ:
ຕິດຕໍ່: ທ່ານ ນ ສຸພັນສາ ວັນນະໄຊ
ເບີໂທ: 020 28032393